ການປ່ຽນແປງຕ່າງໆທີ່ຕ້ອງໄດ້ແຈ້ງໃຫ້ກົມ DSHS ຮູ້

Washington State Department of Social & Health Services

ການຝາກເດັກທີ່ກ່ຽວພັນກັບການເຮັດວຽກ (WCCC)

ຍ້ອນທ່ານໄດ້ຮັບການຊ່ວຍເຫລືອຕ່າງໆກ່ຽວກັບ WCCC, ທ່ານຕ້ອງໄດ້ຣາຍງານໃຫ້ຜູ້ເຮັດວຽກອະນຸຍາດການຝາກເດັກ ຕາມຕາຕະຣາງຢູ່ລຸ່ມນີ້:

ຣາຍງານ...

ພາຍໃນ 24 ຊົ່ວໂມງ:

- ເມື່ອຮູ້ວ່າມີຂ່າວຂໍ້ມູນໃດໜຶ່ງກ່ຽວກັບການຖືກຟ້ອງຮ້ອງຄະດີ ຫລືການຖືກຕັດສິນລົງໂທດໃດໜຶ່ງຕໍ່ຜູ້ໃຫ້ການບໍຣິການພາຍໃນບ້ານ/ຍາດພີ່ນ້ອງຂອງທ່ານ; ຫລື
- ເມື່ອຮູ້ວ່າມີຂ່າວຂໍ້ມູນໃດໜຶ່ງກ່ຽວກັບການຖືກຟ້ອງຮ້ອງຄະດີ, ຫລືການຖືກຕັດສິນລົງໂທດຕໍ່ຜູ້ໃດໜຶ່ງພາຍໃນບ້ານທີ່ມີອາຍຸສິບຫົກປີ ແລະແກ່ກວ່າ ທີ່ຢູ່ກັບຜູ້ໃຫ້ການບໍຣິການດູແລ ເມື່ອຫາກມີການບໍຣິການເກີດຢູ່ພາຍນອກບ້ານຂອງເດັກເອງ.

ພາຍໃນ 5 ມື້:

- ເມື່ອມີການປ່ຽນແປງຕ່າງໆໃດໜຶ່ງກັບຜູ້ໃຫ້ການບໍຣິການດູແລຕ່າງໆ.

ພາຍໃນ 10 ມື້:

- ຄວາມຕ້ອງການຊົ່ວໂມງການດູແລ (ເພີ່ມຫລືລຸດຊົ່ວໂມງລົງ);
- ຣາຍໄດ້ໃນຄອບຄົວຂອງທ່ານ, ຣວມທັງເງິນສິດຊ່ວຍເຫລືອຄອບຄົວຈຳເປັນ (TANF), ຫລືເງິນລ້ຽງເດັກມີການປ່ຽນແປງຂຶ້ນຫລືລົງ;
- ຈຳນວນຄົນໃນຄອບຄົວຂອງທ່ານ ເຊັ່ນຄົນໃນຄອບຄົວຂອງທ່ານຍ້າຍເຂົ້າມາຫລືຍ້າຍອອກຈາກບ້ານຂອງທ່ານ;
- ການງານ, ໂຮງຮຽນ ຫລືກິດຈະກັມຕ່າງໆທີ່ຖືກອະນຸມັດໂດຍໂຄງການຊ່ວຍເຫລືອເງິນສິດ (TANF) (ການເລີ່ມ, ຢຸດ, ຫລືການປ່ຽນແປງ);
- ບ່ອນຢູ່ແລະເລກໂທຣະສັບຂອງຜູ້ໃຫ້ການດູແລພາຍໃນບ້ານທ່ານ/ຍາດພີ່ນ້ອງທີ່ໃຫ້ການດູແລ;
- ບ່ອນຢູ່ແລະເລກໂທຣະສັບຂອງທ່ານ; ແລະ
- ຂໍ້ຜູກມັດກົດໝາຍອອກເງິນລ້ຽງເດັກຂອງທ່ານ.

Changes that must be reported to DSHS

Washington State Department of Social & Health Services

Working Connections Child Care (WCCC)

Because you receive WCCC, you must report changes to your child care authorizing worker following the schedule below:

Report...

Within 24 hours:

- Any pending charges or conviction information you learn about your in-home/relative provider; or
- Any pending charges or conviction information you learn about anyone sixteen years of age and older who lives with the provider when care occurs outside your child's home.

Within 5 days:

- Any change in providers.

Within 10 days:

- The number of child care hours you need (more or less hours);
- Your household income, including any TANF grant or child support increases or decreases;
- Your household size such as any family member moving in or out of your home;
- Employment, school or approved TANF activity (starting, stopping, or changing);
- The address and telephone number of your in-home/relative provider;
- Your home address and telephone number; and
- Your legal obligation to pay child support.